UNITED NATIONS DEVELOPMENT PROGRAMME

# PRESS RELEASE

## ອົງການສະຫະປະຊາຊາດເພື່ອການພັດທະນາ ຈັດງານເຜີຍແຜ່ບົດລາຍງານ ວ່າດ້ວຍ "ການຫວ່າງງານຂອງໄວໜຸ່ມ ໃນ ສປປ ລາວ", 30 ກໍລະກົດ 2021

ອີງຕາມບົດສຳຫຼວດແຮງງານລາວ 2017, ໃນຈຳນວນປະຊາກອນປະມານ 60% ທີ່ມີອາຍຸຕ່ຳ່ກວ່າ 25 ປີ, ມີໄວໜຸ່ມທີ່ສາມາດຖືກຈ້າງງານ ແຕ່ບໍ່ມີວຽກເຮັດ ປະມານ 37%. ຍິ່ງໄປກວ່ານັ້ນ, ພະຍາດ ໂຄວິດ 19 ໄດ້ສົ່ງຜົນໃຫ້ເກີດມີຄວາມບໍ່ສະຖຽນລະພາບ ໃນຂະແໜງການບໍລິການ ສຳລັບໄວໜຸ່ມ ທີ່ເຄີຍຂ້ອນຂ້າງມີຄວາມໝັ້ນຄົງກ່ອນການລະບາດຂອງພະຍາດ ໂຄວິດ-19. ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເລີ່ມດຳເນີນການສຶກສາ ຕັ້ງແຕ່ເດືອນ ພະຈິກ 2020 ເຖິງ ມັງກອນ 2021 ກ່ຽວກັບປັດໄຈທີ່ມີອິດທິພົນຕໍ່ການຫວ່າງງານຂອງໄວໜຸ່ມ ແລະ ໃຫ້ຄຳແນະນຳຕໍ່ກັບແນວທາງທີ່ມີຄວາມເປັນໄປໄດ້ໃນອະນາຄົດ.

ໃນວັນທີ່ 30 ກໍລະກົດ 2021, ບົດລາຍງານວ່າດ້ວຍ "ການຫວ່າງງານຂອງໄວໜຸ່ມ ໃນ ສປປ ລາວ" ໄດ້ຖືກເຜີຍແຜ່ ເຊິ່ງໃນງານດັ່ງກ່າວ ໄດ້ມີຜູ່ເຂົ້າຮ່ວມຈາກຫຼາຍໆພາກສ່ວນທີ່ກ່ຽວຂ້ອງ ລວມມີ ໄວໜຸ່ມ, ລັດຖະບານ, ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ ແລະ ສະຖາບັນການສຶກສາ. ໂດຍລວມແລ້ວ, ສະຖານະການ -19 ໃນປະຈຸບັນນີ້ ຄວນກະຕຸ້ນໃຫ້ໄວໜຸ່ມຊອກຫາວຽກໃນຂົງເຂດອື່ນ ນອກເໜືອຈາກຂົງເຂດບໍລິການ, ແຕ່ເນື່ອງຈາກທັກສະ ແລະ ປະສົບການເຮັດວຽກທີ່ຈຳກັດ ລວມທັງການຈ້າງ

# PRESS RELEASE

ງານໃນບາງຂົງເຂດທີ່ຍັງບໍ່ຈັດເຈນເທົ່າທີ່ຄວນ ຈຶ່ງເຮັດໃຫ້ສະພາບການວ່າງງານຂອງໄວໜຸ່ມມີການສືບຕໍ່.

ຜູ່ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ, ທ່ານ ນາງ ຣິຄາດາ ຣິເຈີ, ໄດ້ກ່າວວ່າ: "ພວກເຮົາມີຄວາມເຊື່ອໝັ້ນວ່າ ໄວໜຸ່ມແມ່ນປັດໃຈສຳຄັນຂອງການປ່ຽນແປງທີ່ດີ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງຂອງປະເທດນີ້. ການເຂົ້າໃຈອຸປະສັກສຳຄັນ ທີ່ກີດຂວາງໃຫ້ພວກເຂົາບໍ່ສາມາດ ພັດທະນາທັກສະ ແລະ ໄດ້ຮັບການຈ້າງງານ ແມ່ນຖືວ່າເປັນອີກບາດກ້າວໜຶ່ງໃນການແກ້ໄຂບັນຫາດັ່ງກ່າວ"

ອ່ານບົດລາຍງານເພີ່ມຕື່ມ ໄດ້ທີ່: https://bit.ly/3hY3W3t